ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------=====00000=====----------

ທະນາຄານແຫ່ງ ສປປ ລາວ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ເລກທີ: 51 /ກຕຂ

ນະຄອນຫຼວງວຽງຈັນ, ວັນທີ: 05 JAN 2017

ສຳນັກງານ ຄຄຊ
15
06 JAN 2017
ໂທລະສັບ 021 217770

## ສະໂນດນຳສົ່ງ

ຮຽນ: - ທ່ານ ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

- ທ່ານ ຫົວໜ້າກົມ-ທຽບເທົ່າພາຍໃນ ທະນາຄານແຫ່ງ ສປປ ລາວ ທີ່ນັບຖື.

ເລື່ອງ: ນຳສົ່ງເອກະສານ .

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 600/ທຫລ, ລົງວັນທີ 12/07/2013.

ກົມເຕັກໂນໂລຊີຂໍ້ມູນຂ່າວສານ ຂໍຖືເປັນກຽດນຳສົ່ງເອກະສານມາຍັງທ່ານ ດັ່ງນີ້:

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ຂໍ້ຕົກລົງວ່າດ້ວຍການແບ່ງໜ້າທີ່ຮັບຜິດຊອບຂອງ ຄະນະກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 50/ກຕຂ, ລົງວັນທີ 05 ມັງກອນ 2017. | 01 ຊຸດ. | ເພື່ອຊາບ. |

ຮັກສາການຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ

ໄຊແກ້ວ ທອງສີວິໄລ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

ທະນາຄານແຫ່ງ ສປປ ລາວ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ເລກທີ: 50 /ກຕຂ

ນະຄອນຫຼວງວຽງຈັນ, ວັນທີ: 05 JAN 2017

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງໜ້າທີ່ຮັບຜິດຊອບຂອງຄະນະກົມ ກົມເຕັກໂນໂລຊີຂໍ້ມູນຂ່າວສານ

- ອີງຕາມ ຂໍ້ຕົກລົງວ່າວດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 600/ທຫລ, ລົງວັນທີ 12/7/2013.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຮັກສາການຫົວໜ້າ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 1064/ທຫລ, ລົງວັນທີ 7/12/2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຮອງຫົວໜ້າ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 1065/ທຫລ, ລົງວັນທີ 7/12/2016 ແລະ ສະບັບເລກທີ 1107/ທຫລ, ລົງວັນທີ 16/12/2016.

### ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານຕົກລົງ:

<u>ມາດຕາ 1.</u> ການແບ່ງໜ້າທີ່ຮັບຜິດຊອບຂອງຄະນະກົມ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ຕາມລາຍລະອຽດດັ່ງນີ້:

1. ທ່ານ ໄຊ່ແກ້ວ ຫຼວງສີວິໄລ ຮັກສາການຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ
   - ຮັບຜິດຊອບຊີ້ນຳລວມວຽກງານຮອບດ້ານຂອງກົມ, ລົງເລິກວຽກງານການເມືອງ-ແນວຄິດ, ການຈັດຕັ້ງ ແລະພະນັກງານ;
   - ລົງເລິກຊີ້ນຳວຽກງານ ພະແນກຂໍ້ມູນສິນເຊື່ອ;
   - ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.
2. ທ່ານ ນາງ ສຸດທິດາ ອຸລາ ຮອງຫົວໜ້າ ກົມເຕັກໂນໂລຊີຂໍ້ມູນຂ່າວສານ
   - ຮັບຜິດຊອບຊ່ວຍວຽກຫົວໜ້າກົມໃນການຊີ້ນຳ-ນຳພາວຽກງານລວມຂອງກົມ;
   - ລົງເລິກຊີ້ນຳວຽກງານ ພະແນກບໍລິຫານຂໍ້ມູນ ແລະ ບຳລຸງຮັກສາ;
   - ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫົວໜ້າກົມ.
3. ທ່ານ ພຸດສາລາ ອິນດາລາ ຮອງຫົວໜ້າ ກົມເຕັກໂນໂລຊີຂໍ້ມູນຂ່າວສານ
   - ຮັບຜິດຊອບຊ່ວຍວຽກຫົວໜ້າກົມ ໃນການຊີ້ນຳ-ນຳພາວຽກງານລວມຂອງກົມ;
   - ລົງເລິກຊີ້ນຳວຽກງານ ພະແນກຄຸ້ມຄອງບັດທະນາຄານ ແລະ ພະແນກ ຊຳລະສະສາງເອເລັກໂຕຣນິກ;
   - ລົງເລິກຊີ້ນຳວຽກງານ 3 ອົງການຈັດຕັ້ງມະຫາຊົນຂອງກົມ;
   - ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫົວໜ້າກົມ.

4. ທ່ານ ລັດສະໝີ ສຸວັນທອງ ຮອງຫົວໜ້າ ກົມເຕັກໂນໂລຊີຂໍ້ມູນຂ່າວສານ
   - ຮັບຜິດຊອບຊ່ວຍວຽກຫົວໜ້າກົມ ໃນການຊີ້ນຳ-ນຳພາວຽກງານລວມຂອງກົມ;
   - ລົງເລິກຊີ້ນຳວຽກງານ ພະແນກພັດທະນາໂປຣແກຣມ ແລະ ພະແນກຄຸ້ມຄອງເຄືອຂ່າຍ ແລະ ແມ່ຂ່າຍ;
   - ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າກົມ.

<u>ມາດຕາ 2.</u> ບັນດາທ່ານທີ່ໄດ້ຮັບການແບ່ງໜ້າທີ່ຮັບຜິດຊອບ, ບັນດາພະແນກ ແລະ ພະນັກງານທັງໝົດພາຍໃນ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ຈົ່ງຮັບຊາບ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ເປັນຢ່າງດີ.

<u>ມາດຕາ 3.</u> ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

<u>ຮັກສາການຫົວໜ້າ ກົມເຕັກໂນໂລຊີຂໍ້ມູນຂ່າວສານ</u>

ໄຊ່ແກ້ວ ຫຼວງສີວິໄລ